**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 1796 /ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 01 JUL 2022

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝວິສາມັນ ຄັ້ງທີ 4/2022

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/LSX, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາບໍລິຫານສະໄໝວິສາມັນ ຄັ້ງທີ **4/2022**, ວັນທີ **30 ມິຖຸນາ 2022**, ມີລາຍລະອຽດລຸ່ມນີ້:

1. ຮັບຮອງການແຕ່ງຕັ້ງກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າທີ່ໄປຮັບໜ້າທີ່ໃໝ່, ອາຍຸການຂອງກຳມະການສະພາບໍລິຫານບໍລິສັດ ແລະ ການດັດແກ້ກົດລະບຽບ ຂອງ ບໍລິສັດ ມາດຕາ 9 ວ່າດ້ວຍກຳມະການສະພາບໍລິຫານ ດັ່ງນີ້:

   1) ແຕ່ງຕັ້ງ ທ່ານ ວັນແສງ ວັນນະວົງ ຮັກສາການຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ເປັນກຳມະການສະພາບໍລິຫານຜູ້ໃໝ່ ເພື່ອສືບຕໍ່ປະຕິບັດໜ້າທີ່ບໍລິຫານບໍລິສັດແທນກຳມະການສະພາບໍລິຫານຜູ້ເກົ່າທີ່ໄປຮັບໜ້າທີ່ໃໝ່ ແລະ ກຳນົດອາຍຸການຂອງກຳມະການສະພາບໍລິຫານບໍ່ເກີນສອງປີ ໂດຍເລີ່ມນັບແຕ່ມື້ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2022 ເປັນຕົ້ນໄປ.
   2) ດັດແກ້ກົດລະບຽບຂອງບໍລິສັດ ມາດຕາ 9: ວ່າດ້ວຍກຳມະການສະພາບໍລິຫານ ເພື່ອເພີ່ມ ແລະ ປ່ຽນຊື່-ທີ່ຢູ່ຂອງກຳມະການສະພາບໍລິຫານຜູ້ໃໝ່.

   ແລະ ໃຫ້ນຳເລື່ອງດັ່ງກ່າວສະເໜີຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2022 ເພື່ອພິຈາລະນາຮັບຮອງຕາມລະບຽບການ.

2. ກຳນົດ ວັນ-ເວລາ, ສະຖານທີ່ ແລະ ກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2022. ມີລາຍລະອຽດດັ່ງນີ້:

   (1) ສະຖານທີ່: ຫ້ອງປະຊຸມຊັ້ນ 1 ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ.

   (2) ວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າກອງປະຊຸມ: ວັນທີ 08/07/2022.

   (3) ວັນ-ເວລາປະຊຸມ: ວັນທີ 29/07/2022 ເວລາ 13:30-15:00 ໂມງ ຜູ້ຖືຮຸ້ນລົງທະບຽນ, ເວລາ 15:00-17:00 ໂມງ ປະຊຸມວິສາມັນຜູ້ຖືຮຸ້ນ.

3. ກຳນົດວາລະກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2022 ແລະ ການກຳນົດຜູ້ຕາງໜ້າຜູ້ຖືຮຸ້ນໃນການຮັບໃບສັນທະ ມີລາຍລະອຽດດັ່ງນີ້:

**1)** ວາລະກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2022 ມີດັ່ງນີ້:

ວາລະທີ 1. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021.

ວາລະທີ 2. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຮັກສາການຜູ້ອຳນວຍການໃຫຍ່ຜູ້ໃໝ່ ແລະ ກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າ ທີ່ໄດ້ໄປຮັບໜ້າທີ່ໃໝ່.

ວາລະທີ 3. ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍກຳມະການສະພາບໍລິຫານ.

**2)** ກຳນົດຜູ້ຕາງໜ້າຜູ້ຖືຮຸ້ນໃນການຮັບໃບມອບສັນທະຄື: ແຕ່ງຕັ້ງ ທ່ານ ຄຳມູນ ວິພົງໄຊ, ທ່ານ ຄຳແກ້ວ ວິສີສົມບັດ ແລະ ທ່ານ ປອ. ພັນປະກິດ ອ່ອນພັນດາລາ ກຳມະການສະພາບໍລິຫານອິດສະຫຼະ ເປັນຜູ້ມອບຮັບສັນທະຈາກຜູ້ຖືຮຸ້ນ; ແລະ

**3)** ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2022 ຈະໄດ້ຈັດຂຶ້ນເປັນ 02 ລະບົບຄື: ລະບົບແບບຊ້ອງໜ້າທີ່ຫ້ອງປະຊຸມຊັ້ນ 01 ສຳນັກງານໃຫຍ່ລັດວິສາຫະກິດໄຟຟ້າລາວ ແລະ ລະບົບແບບອອນລາຍ. ຊຶ່ງລາຍລະອຽດຄຳແນະນຳການປະຊຸມອອນລາຍຈະແຈ້ງໃຫ້ຜູ້ຖືຮຸ້ນຮັບຊາບພ້ອມກັບໜັງສືແຈ້ງເຊີນເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2022.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

<u>ຜູ້ອຳນວຍການໃຫຍ່</u>

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
EDL-Generation Public Company

ວັນແສງ ວັນນະວົງ
ຮັກສາການ ຜູ້ອຳນວຍການໃຫຍ່

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la